**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ກົມບໍລິການທະນາຄານ

ເລກທີ 1422/ບກ

ນະຄອນຫຼວງວຽງຈັນ, ວັນທີ 27 ພຶດສະພາ 2020

# ຄໍາແນະນໍາການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍໂຄງການສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19

- ອີງຕາມ ພາລະບົດບາດຂອງກົມບໍລິການທະນາຄານ ສະບັບເລກທີ 49/ທຫລ ລົງວັນທີ 01 ມີນາ 2001;
- ອີງຕາມ ຂໍ້ຕົກລົງວ່າດ້ວຍດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດ COVID-19 ສະບັບເລກທີ 318/ທຫລ, ລົງວັນທີ 19 ພຶດສະພາ 2020;

ເພື່ອຮັບປະກັນໃຫ້ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍໂຄງການສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບ ຈາກພະຍາດ COVID-19 ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020 (ຕໍ່ໄປນີ້ ເອີ້ນວ່າ ຂໍ້ຕົກລົງເລກທີ 318/ທຫລ ) ຢ່າງເປັນເອກະພາບ ແລະ ມີປະສິດທິຜົນ.

## ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ<br>ອອກຄໍາແນະນໍາຈັດຕັ້ງປະຕິບັດ ດັ່ງນີ້:

1. ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ຕ້ອງຮັບປະກັນໃຫ້ບຸກຄົນ, ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ມີເງື່ອນໄຂ ແລະ ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ສາມາດເຂົ້າຫາແຫຼ່ງທຶນໄດ້ຢ່າງທົ່ວເຖິງ ແລະ ສະເໝີພາບກັນ ເພື່ອນໍາໃຊ້ແຫຼ່ງທຶນເຂົ້າໃນຜະລິດ, ການຟື້ນຟູກິດຈະການ ແລະ ສືບຕໍ່ການດໍາເນີນທຸລະກິດຂອງຕົນ;
2. ການຈັດແບ່ງຂະໜາດຂອງວິສາຫະກິດ ແມ່ນໃຫ້ປະຕິບັດຕາມດໍາລັດວ່າດ້ວຍການຈັດແບ່ງຂະໜາດວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017;
3. ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ເປັນຜູ້ກໍານົດເງື່ອນໄຂລະອຽດເປົ້າໝາຍລູກຄ້າທີ່ຈະປ່ອຍສິນເຊື່ອ ຕາມລະບຽບການພາຍໃນຂອງຕົນ ແລະ ຕ້ອງສອດຄ່ອງກັບເປົ້າໝາຍທີ່ໄດ້ກໍານົດໄວ້ໃນ ຂໍ້ຕົກລົງເລກທີ 318/ທຫລ;
4. ການສະເໜີເຂົ້າຮ່ວມໂຄງການ ຫຼື ສະເໜີຂໍສິນເຊື່ອໂຄງການຂອງທະນາຄານທຸລະກິດ ມີໄລຍະເວລາທັງໝົດ 18 ເດືອນ ນັບແຕ່ມື້ອອກຂໍ້ຕົກລົງເລກທີ 318/ທຫລ ເປັນຕົ້ນໄປ ແລະ ກໍານົດຮອບເວລາໃນການນໍາສົ່ງເອກະສານ ການສະເໜີເຂົ້າຮ່ວມໂຄງການ ຫຼື ສະເໜີຂໍສິນເຊື່ອໂຄງການ ດັ່ງນີ້:
   - ຄັ້ງທີ 1: ພາຍໃນວັນທີ 20 ພຶດສະພາ 2020 ຫາ ວັນທີ 03 ກໍລະກົດ 2020;
   - ຄັ້ງທີ 2: ພາຍໃນວັນທີ 24 ກໍລະກົດ 2020 ຫາ ວັນທີ 07 ກັນຍາ 2020;
   - ຄັ້ງທີ 3: ພາຍໃນວັນທີ 28 ກັນຍາ 2020 ຫາ ວັນທີ 11 ພະຈິກ 2020;
   - ຄັ້ງທີ 4: ພາຍໃນວັນທີ 04 ທັນວາ 2020 ຫາ ວັນທີ 18 ມັງກອນ 2021;
   - ຄັ້ງທີ 5: ພາຍໃນວັນທີ 08 ກຸມພາ 2021 ຫາ ວັນທີ 26 ມີນາ 2021;
   - ຄັ້ງທີ 6: ພາຍໃນວັນທີ 26 ເມສາ 2021 ຫາ ວັນທີ 10 ພຶດສະພາ 2021;

- ຄັ້ງທີ 7: ພາຍໃນວັນທີ 01 ມິຖຸນາ 2021 ຫາ ວັນທີ 15 ກໍລະກົດ 2021;
- ຄັ້ງທີ 8: ພາຍໃນວັນທີ 06 ສິງຫາ 2021 ຫາ ວັນທີ 21 ກັນຍາ 2021;
- ຄັ້ງທີ 9: ພາຍໃນວັນທີ 13 ຕຸລາ 2021 ຫາ ວັນທີ 29 ພະຈິກ 2021.

5. ແຜນການສະໜອງສິນເຊື່ອຂອງທະນາຄານທຸລະກິດ ຕ້ອງປະກອບດ້ວຍຂໍ້ມູນຕົ້ນຕໍ ດັ່ງນີ້:
   - ລາຍລະອຽດຂໍ້ມູນຂອງເປົ້າໝາຍລູກຄ້າແຕ່ລະປະເພດ ເຊັ່ນ: ຊື່, ທີ່ຢູ່, ຂະໜາດ ແລະ ປະເພດທຸລະກິດ, ວົງເງິນສະເໜີກູ້, ເປົ້າໝາຍການນຳໃຊ້ເງິນກູ້, ໄລຍະກູ້ຢືມ. ກໍລະນີ ເປັນວິສາຫະກິດ ຕ້ອງມີຊື່ຜູ້ອຳນວຍການ ຫຼື ຜູ້ບໍລິຫານ;
   - ຈຳນວນສິນເຊື່ອທີ່ຕ້ອງການທັງໝົດ;
   - ສຳເນົາໜັງສືສະເໜີຂໍກູ້ຢືມຂອງລູກຄ້າ.
6. ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາອະນຸມັດສິນເຊື່ອ ໃຫ້ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ບົນພື້ນຖານທະນາຄານທຸລະກິດນັ້ນປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນຂອງການສະເໜີຂໍສິນເຊື່ອທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ 318/ທຫລ ຖືກຕ້ອງ ແລະ ຄົບຖ້ວນ. ກໍລະນີ ວົງເງິນກູ້ລວມທີ່ແຕ່ລະທະນາຄານທຸລະກິດສະເໜີມາ ເກີນແຫຼ່ງທຶນຂອງໂຄງການ ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາສະເລ່ຍຖ່ວງນໍ້າໜັກຕາມແຜນການສະໜອງສິນເຊື່ອຂອງທະນາຄານທຸລະກິດ ແລະ ອະນຸມັດຕາມສັດສ່ວນທີ່ໄດ້ຮັບຈັດສັນ;
7. ໃນເວລາພິຈາລະນາການສະເໜີເຂົ້າຮ່ວມໂຄງການ ຫຼື ສະເໜີຂໍສິນເຊື່ອໂຄງການ ຫາກເຫັນວ່າມີຄວາມຈຳເປັນ ທະນາຄານແຫ່ງ ສປປ ລາວ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ລວມທັງເອກະສານປະກອບການສະເໜີຂໍສິນເຊື່ອຂອງເປົ້າໝາຍລູກຄ້າຂອງທະນາຄານທຸລະກິດ, ມີສິດເຊີນ ເປົ້າໝາຍລູກຄ້າ ຫຼື ພາກສ່ວນທີ່ກ່ຽວຂ້ອງ ມາປຶກສາຫາລື ພ້ອມດຽວກັນນັ້ນ ກໍ່ມີສິດໃນການລົງຢັ້ງຢືນທຸລະກິດຈະການ ຫຼື ເກັບກຳຂໍ້ມູນກ່ຽວກັບເປົ້າໝາຍລູກຄ້າ ແລະ ພາກສ່ວນດັ່ງກ່າວ ຕ້ອງອຳນວຍຄວາມສະດວກໃຫ້ແກ່ທະນາຄານແຫ່ງ ສປປ ລາວ;
8. ການຄິດໄລ່ດອກເບ້ຍຂອງທະນາຄານແຫ່ງ ສປປ ລາວ ຕໍ່ທະນາຄານທຸລະກິດ ແມ່ນທຸກໆທ້າຍເດືອນ 6 ແລະ ທ້າຍເດືອນ 12 ຕາມທີ່ກຳນົດໄວ້ໃນສັນຍາເງິນກູ້;
9. ທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ກຳນົດອັດຕາດອກເບ້ຍປ່ອຍສິນເຊື່ອໃຫ້ແກ່ບຸກຄົນ, ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ ບໍ່ເກີນ 5,5% ຕໍ່ປີ ໃນນີ້ ແມ່ນລວມຄ່າທຳນຽມຕ່າງໆທີ່ຕິດພັນກັບການປ່ອຍກູ້ທັງໝົດແລ້ວ;
10. ບົດສະຫຼຸບລາຍງານການນຳໃຊ້ເງິນກູ້ ຕ້ອງປະກອບດ້ວຍຂໍ້ມູນຕົ້ນຕໍ ເຊັ່ນ: ລາຍຊື່ລູກຄ້າ, ປະເພດທຸລະກິດ, ລາຍລະອຽດການນຳໃຊ້ເງິນກູ້, ຍອດເຫຼືອເງິນກູ້, ຄວາມຄືບໜ້າຂອງໂຄງການລົງທຶນ ຫຼື ທຸລະກິດ ແລະ ອື່ນໆ;
11. ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ວ່າການຫົວໜ້າກົມບໍລິການທະນາຄານ**

ຄຳແກ້ວ ວິສີສົມບັດ